ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****

ບໍລິສັດ ລາວອາໂກຣເທັກ ມະຫາຊົນ
LAO AGROTECH PUBLIC COMPANY
ບໍລິສັດ ລາວອາໂກຣເທັກ ມະຫາຊົນ
ບ້ານ ໜອງຄົນຄູ, ເມືອງນາຊາຍທອງ
ນະຄອນຫຼວງວຽງຈັນ
ໂທລະສັບ 030 9882809

ເລກທີ 074/ລອທ

ນະຄອນຫຼວງວຽງຈັນ, ວັນທີ 19 MAY 2024

ແຜນປັບປຸງແກ້ໄຂການຂາດທຶນ

ຮຽນ: ທ່ານຜູ້ອຳນວຍການໃຫ່ຍຕະຫຼາດຫຼັກຊັບລາວ ທີ່ນັບຖື.

ເລື່ອງ: ນຳສົ່ງແຜນການປັບປຸງແກ້ໄຂການຂາດທຶນຂອງບໍລິສັດ ລາວອາໂກຣເທັກ ມະຫາຊົນ ປະຈຳປີ 2024.

- ອີງຕາມ: ລະບຽບວ່າດ້ວຍການຈົດທະບຽນຮຸ້ນ(ສະບັບປັບປຸງ) ເລກທີ 007/23 ຕລຊລ, ລົງວັນທີ 12 ກັນຍາ 2023 ມາດຕາ 26.
- ອີງຕາມ: ໜັງສື ແຈ້ງການກ່ຽວກັບການຮັກສາສະຖານະການເປັນບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ 575/ຕລຊລ, ລົງວັນທີ 16 ພຶດສະພາ 2024

ຕາມທີ່ບໍລິສັດ ລາວອາໂກຣເທັກ ມະຫາຊົນ (LAT) ໄດ້ຮັບໜັງສືແຈ້ງການນຳສົ່ງການຮັກສາສະຖານະການເປັນບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ(ສ້າງແຜນການປັບປຸງການແກ້ໄຂການຂາດທຶນ ຂອງບໍລິສັດ) ສະບັບເລກທີ 575/ຕລຊລ ລົງວັນທີ 6 ພຶດສະພາ 2024 ບໍລິສັດມີຄວາມຍິນດີເປັນຢ່າງຍິ່ງທີ່ຈະຊີ້ແຈ້ງເຖິງແຜນປັບປຸງການແກ້ໄຂການຂາດທຶນຂອງບໍລິສັດ ລາວອາໂກຣເທັກ ມະຫາຊົນ ກັບຄະນະກຳມະການຄຸ້ມຄອງຫຼັກຊັບລາວ.

I. ສາເຫດ ແລະ ຜົນກະທົບ ທີ່ເຮັດໃຫ້ບໍລິສັດ ຂາດທຶນ

ໃນປີ2023 ບໍລິສັດ ລາວອາໂກຣເທັກ ມະຫາຊົນ ທີ່ໄດ້ຮັບຜົນກະທົບຈາກລາຄານ້ຳມັນປາມດິບເພີ່ມຂຶ້ນ, ບໍລິສັດໄດ້ພົບກັບສະພາບໄພແຫ້ງແລ້ງເຮັດໃຫ້ຜົນຜະລິດຕົ້ນປາມຫຼຸດລົງຫຼາຍກວ່າ 60% ຂອງຜົນຜະລິດຕາມປົກກະຕິ ແລະ ໄດ້ພົບກັບບັນຫາພາວະເສດຖະກິດທີ່ຕົກຕ່ຳສົ່ງຜົນໃຫ້ອັດຕາເງິນເຟີ້ທົ່ວໂລກ. ບໍລິສັດ ບໍ່ໄດ້ຮັບການສົ່ງເສີມການຜະລິດນ້ຳມັນໄບໂອດີເຊວ ຈາກກະຊວງອຸດສາຫະກຳ ຈຶ່ງເຮັດການຜະລິດຫຼຸດລົງ ແລະ ບໍລິສັດຈຶ່ງມີຄວາມຈຳເປັນທີ່ຕ້ອງໄດ້ນຳວັດຖຸດິບຈາກພາຍນອກເພື່ອເຂົ້າມາຕອບສະໜອງພາຍໃນ. ຍ້ອນສາເຫດນີ້ນຈຶ່ງສົ່ງຜົນກະທົບໃຫ້ບໍລິສັດຂາດທຶນ.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ ໄດ້ຮັບຜົນກະທົບຈາກອັດຕາເງິນເຟີ້, ຂາດທຶນຈາກອັດຕາແລກປ່ຽນ , ຜົນການຜະລິດຫຼຸດລົງເພາະວ່າໃນຊຸມປີຜ່ານມາຊາວສວນປາມຂາດການດູແລ, ບາລຸງຮັກສາ, ໃສ່ປຸ໋ຍ ແລະ ສະພາບອາກາດແຫ້ງແລ້ງເຮັດໃຫ້ຂາດແຄ້ນນ້ຳ. ຈຶ່ງເຮັດໃຫ້ໄດ້ຮັບຜົນຜະລິດຕ່ຳລົງຈາກປີກ່ອນ

II. ວິທີແກ້ໄຂທີ່ສົ່ງຜົນໃຫ້ບໍລິສັດ ຂາດທຶນ

ຜູ້ອຳນວຍການ ບໍລິສັດ ລາວອາໂກຣເທັກ ມະຫາຊົນ ກໍ່ບໍ່ໄດ້ນິ່ງນອນໃຈຕໍ່ກັບບັນຫາດັ່ງກ່າວແຕ່ຢ່າງໃດ ໂດຍໄດ້ປຶກສາຫາລືເພື່ອຫາແນວທາງແກ້ໄຂຕໍ່ກັບສະພາບບັນຫາດັ່ງກ່າວທີ່ເກີດຂຶ້ນ. ເພື່ອກອບກູ້ສະຖານະການ, ບໍລິສັດໄດ້ ສົ່ງເສີມໃຫ້ຊາວສວນປາມເອົາໃຈໃສ່ໃນການດູແລ, ບຳລຸງຮັກສາ ຕົ້ນປາມ ເພື່ອຜົນຜະລິດທີ່ຈະໄດ້ຮັບໃນ ປີຕໍ່ໄປ.

ບໍລິສັດ ຍັງຈະໄດ້ເຂັ້ມງວດຕໍ່ກັບການຄວບຄຸມການຜະລິດພາຍໃນເຊັ່ນ: ການຄັດຄຸນນະພາບວັດຖຸດິບທີ່ ນຳມາປ້ອນໃນອຸດສາຫະກຳ ເພື່ອຫຼຸດອັດຕາສູນເສຍ ແລະ ໃຫ້ມີຄຸນນະພາບໃນການຜະລິດ. ດັ່ງນັ້ນ, ບໍລິສັດຫ້ອງ ຢ່າງຍິ່ງວ່າທາງຕະຫຼາດຫຼັກຊັບລາວໄດ້ຮັບຄວາມຊັດເຈນຕໍ່ແຜນປັບປຸງແກ້ໄຂການຂາດທຶນຂອງ ບໍລິສັດ ແລະ ເຂົ້າໃຈຕໍ່ກັບບັນຫາທີ່ເກີດຂຶ້ນຂອງບໍລິສັດດ້ວຍ. ໂດຍທາງບໍລິສັດ ມີແຜນງົບປະມານ ປະຈຳປີ2024 ດັ່ງນີ້:

➢ ປະລິມານການຂາຍ

ລາຍການສິນຄ້າ		ຫົວໜ່ວຍ	ລາຄາຂາຍ(ກີບ)		ລາຍຮັບ(ລ້ານກີບ)	
- ນ້ຳມັນປາມດິບ	:	2,400 ໂຕນ	25,000	ກີບ	60,000,000,000	ກີບ
- ກາກປາມ	:	800 ໂຕນ	3,500	ກີບ	2,800,000,000	ກີບ
- ປຸ໋ຍ	:	14,000 ໂຕນ	3,360	ກີບ	3,360,000,000	ກີບ
- ຕົ້ນກ້າປາມ	:	250,000 ຕົ້ນ	17,500	ກີບ	4,375,000,000	ກີບ
ລວມງົບປະມານລາຍໄດ້ທັງໝົດ				=	70,535,000,000	ກີບ
ຕົ້ນທຶນຜະລິດຕະພັນທັງໝົດ				=	(66,317,000,000)	ກີບ
ຄ່າໃຊ້ຈ່າຍອ້ອມລາຍໄດ້ທັງໝົດ				=	(844,000,000)	ກີບ
ກຳໄລສຸດທິ				=	3,374,000,000	ກີບ
% ກຳໄລສຸດທິ				=	5%	

❖ ບໍລິສັດຈະສືບຕໍ່ແຜນການດຳເນີດທຸລະກິດ

ແຜນການຂາຍນ້ຳມັນປາມດິບCPO: ບໍລິສັດຄາດຄະເນການຂາຍໂດຍອີງໃສ່ການຜະລິດຂອງບໍລິສັດ. ບວກ ກັບຄວາມຕ້ອງການຂອງຜູ້ບໍລິໂພກ ບໍລິສັດ ມີນະໂຍບາຍຖານລູກຄ້າໃນປີ 2024.

- ແຜນການຂາຍປາມ: ບໍລິສັດຄາດຄະເນການຂາຍໂດຍອີງໃສ່ຄວາມຕ້ອງການຊື້ຂອງຜູ້ບໍລິໂພກໃນປະຈຸບັນ. ບໍລິສັດມີນະໂຍບາຍຂະຫຍາຍຖານລູກຄ້າໃນປີ2024.
- ແຜນການຂາຍປຸ໋ຍ ໃນໄລຍະປີ 2019-2021 ເນື່ອງຈາກສະພາບການລະບາດໂຄວິດ-19 ບໍລິສັດຂາດກະ ສົ່ງເສີມຊາວກະສິກອນ, ເຮັດໃຫ້ຜົນຜະລິດປາມໃນປີຜ່ານມາຫຼຸດລົງຫຼາຍ, ໃນປີ2024 ບໍລິສັດໄດ້ສົ່ງເສີມ ຊາວກະສິກອນ(ລູກສວນບໍລິສັດ ແລະ ສວນນອກບໍລິສັດ) ເພື່ອໃສ່ປຸ໋ຍປາມຕື່ມ. ໃນເດືອນກຸມພາ, ການ ຈອງຈາກຊາວກະສິກອນກວມເອົາ 33 ສ່ວນຮ້ອຍຂອງຈຳນວນການຜະລິດຕະພັນທີ່ຄາດຄະເນຂາຍ.
- ແຜນການຂາຍເບ້ຍປາມ: ບໍລິສັດໄດ້ວາງແຜນການເພື່ອຂໍການຢັ້ງຢືນແນວພັນປາມລາວວຽງ. ເພື່ອສົ່ງອອກ ແລະ ຄາດຄະເນການຂາຍຕາມປະລິມານຂອງບໍລິສັດ ມັນຈະຖືກຜະລິດໃນປີ 2024.

- ແຜນການຂາຍນ້ຳມັນເຊື້ອໄຟຂອງບໍລິສັດຈະເຮັດບົດວິຈານ ແລະ ນຳສະເໜີຕໍ່ກະຊວງອຸດສາຫະກຳ ແລະ ການຄ້າ. ເພື່ອຮ້ອງຂໍໂຄຕ້ານຳເຂົ້ານ້ຳມັນ.

ດັ່ງນັ້ນ, ຈຶ່ງເຮັດແຜນປັບປຸງສະບັບນີ້ຍັງທ່ານເພື່ອຊາບ.

ຮຽນມາດ້ວຍຄວາມນັບຖືຢ່າງສູງ

ບໍລິສັດ ລາວອາໂກຣເທັກ ມະຫາຊົນ

ຜູ້ອຳນວຍການໃຫ່ຍ

ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ Lao Agro Tech Public Company

ກະຊວງ ອຸດສາຫະກຳ ແລະ ການຄ້າ ນະຄອນ ຫຼວງ ວຽງຈັນ

ເສດ ພັດທະນະມາດ

Zait PATTANAMAS